**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 0425 /ອປຊ

ນະຄອນຫຼວງວຽງຈັນ, ວັນທີ 04-02-2026

# ແຈ້ງການ

**ເຖິງ** : ບັນດາ ທ່ານ ສະມາຊິກປະກັນສັງຄົມ ທີ່ນັບຖື.

**ເລື່ອງ**: ເປີດນຳໃຊ້ແອັບປະກັນສັງຄົມ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປະກັນສັງຄົມ ສະບັບເລກທີ 54/ສພ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປະກັນສັງຄົມແຫ່ງຊາດ ສະບັບ ເລກທີ 0555/ຮສສ, ລົງວັນທີ 15 ກຸມພາ 2024.

ອົງການປະກັນສັງຄົມແຫ່ງຊາດ ຂໍແຈ້ງມາຍັງທ່ານ ກ່ຽວກັບການເປີດນຳໃຊ້ແອັບປະກັນສັງຄົມ ຢ່າງເປັນທາງການ ເພື່ອສັງຄົມ ໂດຍສະເພາະແມ່ນສະມາຊິກປະກັນສັງຄົມເຂົ້າເຖິງຂໍ້ມູນຂ່າວສານວຽກງານປະກັນສັງຄົມ, ສິດຜົນປະໂຫຍດ ທີ່ຈະໄດ້ຮັບຈາກລະບົບປະກັນສັງຄົມ ຜ່ານແອັບປະກັນສັງຄົມ ດັ່ງນີ້:

1. ພະນັກງານ-ລັດຖະກອນ ສາມາດກວດສອບຂໍ້ມູນຂອງຕົນເອງ ແລະ ສະມາຊິກຄອບຄົວທີ່ເກີດສິດຮ່ວມ ກ່ຽວກັບໂຮງໝໍທີ່ເກີດສິດປິ່ນປົວ;
2. ຜູ້ປະກັນຕົນທີ່ເປັນຜູ້ອອກແຮງງານໃນຫົວໜ່ວຍແຮງງານຕ່າງໆ ສາມາດ ກວດສອບຂໍ້ມູນຂອງຕົນເອງ ແລະ ສະມາຊິກຄອບຄົວທີ່ເກີດສິດຮ່ວມ ກ່ຽວກັບໂຮງໝໍທີ່ເກີດສິດປິ່ນປົວ, ກວດສິດຮັບອຸດໜູນປະກັນສັງຄົມ ປະເພດຕ່າງໆ ແລະ ກວດເບິ່ງເງິນສົມທົບທີ່ສະສົມໃນໄລຍະຜ່ານມາ ເຖິງ ປະຈຸບັນ, ສຳລັບການມອບເງິນສົມທົບແມ່ນຫົວໜ່ວຍແຮງງານ ເປັນຜູ້ດຳເນີນການ (ບໍ່ໄດ້ມອບດ້ວຍຕົນເອງ), ແຕ່ສາມາດມອບເງິນສົມທົບ ແບບອອນລາຍຜ່ານແອັບດັ່ງກ່າວ ແທນຜູ້ປະກັນຕົນສະໝັກໃຈໄດ້;
3. ຜູ້ປະກັນຕົນສະໝັກໃຈ ສາມາດ **ມອບເງິນສົມທົບຂອງຕົນເອງ ແລະ ຜູ້ສະໝັກໃຈຜູ້ອື່ນໄດ້ ແບບອອນລາຍ ຜ່ານແອັບດັ່ງກ່າວ** ແລະ ກວດເບິ່ງປະຫວັດການຊຳລະເງິນສົມທົບ ໃນໄລຍະຜ່ານມາ ເຖິງປະຈຸບັນ, ຂໍ້ມູນປະກັນສັງຄົມຂອງຕົນເອງ ແລະ ສະມາຊິກຄອບຄົວທີ່ເກີດສິດຮ່ວມ ກ່ຽວກັບໂຮງໝໍທີ່ເລືອກປິ່ນປົວ ແລະ ກວດສິດຮັບອຸດໜູນປະກັນສັງຄົມປະເພດຕ່າງໆ;
4. ບຸກຄົນທົ່ວໄປ ທີ່ບໍ່ແມ່ນຜູ້ປະກັນຕົນ ສາມາດກວດສອບຂໍ້ມູນກ່ຽວກັບໂຮງໝໍທີ່ເກີດສິດປິ່ນປົວຂອງຜູ້ປະກັນຕົນ ແລະ ສະມາຊິກຄອບຄົວທີ່ເກີດສິດຮ່ວມ, ມອບເງິນສົມທົບແທນຜູ້ປະກັນຕົນໄດ້ ແຕ່ບໍ່ສາມາດເຂົ້າເຖິງ ຫຼື ເບິ່ງຂໍ້ມູນຂອງຜູ້ປະກັນຕົນ ໄດ້ຫຼາຍກວ່ານີ້.

- ໝາຍເຫດ: ຜູ້ປະກັນຕົນ ຫຼື ສະມາຊິກປະກັນສັງຄົມ ຫາກຕ້ອງການເຂົ້າເຖິງຂໍ້ມູນການປະກັນຂອງຕົນເອງ ໃນໄລຍະຜ່ານມາ ທ່ານຕ້ອງໄດ້ແຈ້ງເບີລະສັບທີ່ນຳໃຊ້ປະຈຸບັນ ໃຫ້ກັບອົງການປະກັນສັງຄົມແຫ່ງຊາດ ເພື່ອບັນທຶກເຂົ້າຖານຂໍ້ມູນປະກັນສັງຄົມ.

- ກໍລະນີ ບໍ່ເຫັນໄລຍະການຈ່າຍເງິນສົມທົບຄົບຖ້ວນຕາມທີ່ຕົນໄດ້ປະກັນຜ່ານມາ ໃຫ້ປະສານ ອົງການປະກັນສັງຄົມແຫ່ງຊາດ ພະແນກທະບຽນ ແລະ ເງິນສົມທົບຕາມເບີໂທຂ້າງລຸ່ມນີ້.
- ສາມາດເຂົ້າໄປສຶກສາຂໍ້ມູນ ຫຼື ດາວໂຫຼດແອັບປະກັນສັງຄົມ ໄດ້ທີ່ https:// Lsso
- ສອບຖາມຂໍ້ມູນເພີ່ມເຕີມ ພະແນກຂໍ້ມູນ-ຂ່າວສານ ແລະ ເທັກໂນໂລຢີ ໂທ: 020 77982994; ພະແນກທະບຽນ ແລະ ເງິນສົມທົບ ໂທ: 021-243725, 020 76092556, 59641659.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ນໍາໃຊ້ແອັບດັ່ງກ່າວຕາມເຫັນສົມຄວນ.

ຫົວໜ້າອົງການ

ໂຈນແຍງ ແພງທອງສະຫວັດ